ແຜນການສອນ

ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 21 ມົກກະຣາ 2007 ( 1-21-2007)

## ແມ່ນຫຍັງເປັນຄຸນຄ່າຊີວິດຂອງມະນຸດ:

**ຂໍ້ພຣະຄັມພີໃນບົດຮຽນ:** ປະຖົມມະການ 9:5-6;ເພງສັຣເສີນ 139:13-16; ສຸພາສິດ 1:10-11, 15-16,18; 24:10-12.

**ຄວາມຈິງໃນພຣະຄັມພີ:** ມະນຸດທຸກຄົນໄດ້ຖືກສ້າງຂຶ້ນຕາມຮູບຮ່າງຂອງພຣະເຈົ້າ, ພວກເຮົາຕ້ອງຮູ້ຈັກຄຸນຄ່າ ແລະປົກປ້ອງຮັກສາຊີວິດຂອງມະນຸດຊາດໄວ້.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ຂຽນຂຶ້ນເພື່ອຊ່ອຍທ່ານໃຫ້ດໍາເນີນຊີວິດຢູ່ຕາມຫລັກຄໍາສອນຂອງພຣະຄັມພີ.

- ຢັ້ງຢືນຄວາມຮັບຜິດຊອບຂອງທ່ານຕໍ່ພຣະເຈົ້າທີ່ຈະໃຫ້ຄຸນຄ່າ ແລະປົກປ້ອງຮັກສາຊີວິດໄວ້.
- ຊອກຫາທາງທີ່ຈະສະແດງທີ່ບົ່ງບອກວ່າ: ທ່ານເຫັນຄຸນຄ່າຊີວິດຂອງການເປັນມະນຸດ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນໍາຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນໍາໄປສອນ
4. ອ່ານ "**ແຜນການສອນ**" , ຫມາຍບ່ອນສໍາຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້.
5. ເຮັດກອບປີ້(ສໍາເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈໍານວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສໍາຣວດຈໍານວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈໍາ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄໍາພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

### ບົດນໍາ:

1. ຍົກຕົວຢ່າງການເຫັນຂອງຄຸນຄ່າ ຫລືບໍ່ເຫັນຄຸນຄ່າສໍາລັບຊີວິດມະນຸດ. ໃຫ້ໂອກາດນັກຮຽນແບ່ງປັນສິ່ງທີ່ເຂົາໄດ້ຮັບສູ່ກັນຟັງເລັກນ້ອຍ.
2. **ຄໍາຖາມ:** (1)ມີທາງໃດແດ່ທີ່ມະນຸດໄດ້ສະແດງອອກວ່າເຂົາເຫັນຄຸນຄ່າຊີວິດຂອງມະນຸດ? (2)ໃນທາງກົງກັນຂ້າມ ມີທາງໃດແດ່ທີ່ຄົນທັງຫລາຍໄດ້ສະແດງວ່າຊີວິດມະນຸດຂາດຄວາມນັບຖື? (3) ແມ່ນຫຍັງເປັນຄຸນຄ່າຂອງຊີວິດ? (4) ທ່ານຈະສະແດງໃຫ້ຄົນອື່ນຮູ້ໄດ້ຢ່າງໃດວ່າທ່ານເຫັນຄຸນຄ່າຊີວິດຂອງເຂົາເຈົ້າ? (5) ທ່ານຕັ້ງໃຈວ່າຈະຊ່ອຍຊີວິດຄົນອື່ນໃຫ້ໄດ້ຫລາຍປານໃດ, ໄດ້ດົນປານໃດ?

## 1. ສົມຄວນທີ່ຮັບຜິດຊອບ: ( ປະຖົມມະການ 9:5-6)

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ປະຖົມມະການ 9:5-6

- ນໍາຫ້ອງຮຽນໃຫ້ພິຈາຣະນາເບິ່ງຫລັງຈາກນໍ້າຖ້ວມ, ທັງສັດແລະມະນຸດສົມຄວນຮັບຜິດຊອບຕໍ່ຊີວິດຂອງມະນຸດຢ່າງໃດ.

2) **ອະທິບາຍ**: ເພາະພຣະເຈົ້າເປັນຕົ້ນໃຫ້ກໍາເນີດຂອງຊີວິດທັງປວງ ແລະເປັນຜູ້ຊົງຄວາມເມດຕາກະຣຸນາ, ພຣະອົງຊົງສົ່ງຂ່າວນີ້ໄວ້ລ່ວງຫນ້າເພື່ອເປັນພື້ນຖານແລະບົດບາດສໍາລັບສົງຄົມໃຫ້ຮັກສາຄວາມທ່ຽງທັມນີ້ ເພື່ອຈະລົງໂທດຜູ້ທີ່ຂ້າຄົນ.

- ໃຫ້ນັກຮຽນຄົ້ນຄວ້າເບິ່ງພຣະຄໍາເຫລົ່ານີ້ ທີ່ໄດ້ສອນໃຫ້ມີຄວາມໂຄຣົບສິດທິຊີວິດຂອງມະນຸດຢ່າງຊັດເຈນ.

3) **ຄໍາຖາມ**: (1)ການຕັດສິນປະຫານຜູ້ຂ້າຄົນເປັນການປ້ອງກັນຊີວິດຂອງມະນຸດບໍ່? ເປັນ ຫລືເປັນຫຍັງບໍ່ເປັນ?

**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນ**: ປະຖົມມະການ 9:5-6

1. ຄໍາແນະນໍາອັນໃດທີ່ຈໍາເປັນຕໍ່ການດໍາຣົງຊີວິດ ແລະການທໍາລາຍຊີວິດ?
2. ທ່ານຈະຕີຄວາມໝາຍສ່ວນສໍາຄັນຂອງຄໍາສັ່ງແລະຄວາມສໍາຄັນຂອງຊີວິດມະນຸດຢ່າງໃດ?
3. ພຣະຄໍາເຫລົ່ານີ້ໄດ້ຊ່ອຍໃຫ້ມະນຸດມີຄວາມສໍາຄັນຕໍ່ຣັຖບານບໍ່?
4. ໃນມື້ນີ້ພວກເຮົາຈະໃຫ້ເຫດຜົນເຖິງຄຸນຄ່າຂອງຊີວິດຂອງມະນຸດທຸກຄົນຕໍ່ກັນແນວໃດ?

## 2. ສົມຄວນທີ່ຈະສັຣເສີນພຣະເຈົ້າ: ( ເພງສັຣເສີນ 139:13-16)

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ ເພງສັຣເສີນ 139:13-16

2) **ຄໍາຖາມ**: ທ່ານມີຄວາມຮູ້ສຶກແນວໃດໃນເມື່ອທ່ານຮູ້ວ່າພຣະເຈົ້າໄດ້ຊົງຮູ້ຈັກທ່ານ? ສິ່ງນີ້ເປັນການນໍາພາໃຫ້ທ່ານສັຣເສີນພຣະເຈົ້າເໝືອນກັບກະສັດດາວິດ ຫລືມີສິ່ງອື່ນທີ່ຈະຕອບສນອງຫລືບໍ່?

3) ມັນຍາກຫລືງ່າຍສໍາລັບເຮົາທີ່ຈະຮັບເອົາຄໍາຍ້ອງຍໍຈາກຄົນອື່ນແລະເຮັດໃຫ້ເຂົາເຈົ້າເຫັນຄຸນຄ່າຂອງຄົນອື່ນນ້ອຍລົງແນວໃດ?

4) ພວກເຮົາຈະສະແດງຄຸນຄ່າຊີວິດຂອງຄົນອື່ນທີ່ເຮົາບໍ່ຮູ້ຈັກຢ່າງໃດ?

5) **ຊີວິດມະນຸດ**: ການເລີ້ມຕົ້ນຕັ້ງຄັນນັ້ນພຣະເຈົ້າໄດ້ປະກອບຂຶ້ນດ້ວຍຣິດອໍານາດຂອງພຣະອົງຢ່າງມີພລັງ, ສະນັ້ນຈໍາເປັນຕ້ອງຍອມຮັບຄຸນຄ່າຊີວິດມະນຸດ, ເຊັ່ນດຽວກັນພວກເຮົາຄວນຈະຮູ້ຈັກຍ້ອງຍໍສັຣເສີນມະນຸດທີ່ຖືກສ້າງຂຶ້ນມາຕາມລັກສະນະຮູບຮ່າງຂອງພຣະເຈົ້າ.

**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ**: ເພງສັຣເສີນ 139:13-16

1. ພຣະຄໍານີ້ໄດ້ເຮັດໃຫ້ທ່ານມີຄວາມຮູ້ສຶກກ່ຽວກັບຕົວທ່ານ ແລະຄຸນຄ່າຂອງທ່ານສໍາລັບພຣະເຈົ້າຢ່າງໃດ?
2. ນັກວິທຍາສາດໄດ້ເພີ້ມເຕີມ ຫລືຕັດອອກຈາກຄວາມເລິກລັບແລະຄວາມມະຫັສຈັນຂອງຊີວິດອອກໄປຢ່າງໃດ?
3. ມີວິທີທາງໃດທີ່ທ່ານຈະແບ່ງປັນກັບຄົນອື່ນວ່າເຂົາເປັນຄົນສໍາຄັນ ມີຄຸນຄ່າສໍາລັບທ່ານ ແລະສໍາລັບພຣະເຈົ້າ?
4. ມີໃຜແດ່ທີ່ທ່ານຕ້ອງການແນະນໍາໝູນໃຈ ແລະຢືນຢັນເຣື່ອງຄວາມຮັກຂອງພຣະເຈົ້າທີ່ມີຕໍ່ເຂົາ?
5. ທ່ານຈະເຮັດແນວໃດເພື່ອຈະໃຫ້ເຂົາຮູ້ຈັກວ່າພຣະເຈົ້າເປັນຜູ້ສ້າງເຂົາ?

## 3. ສົມຄວນຖືວ່າມີຄຸນຄ່າຣາຄາ: ( ສຸພາສິດ 1:10-11,15-16,18)

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ສຸພາສິດ 1:10-11,15-16,18

2) ໃຫ້ນັກຮຽນແບ່ງປັນຄໍາສອນ ຄໍາປຶກສາທີ່ດີທີ່ເຂົາໄດ້ຮັບຈາກພໍ່ແມ່ເຂົາເຈົ້າ. **ຖາມ**: (1) ຄໍາເວົ້າທີ່ມັກທີ່ສຸດທີ່ທ່ານໄດ້ຮັບຈາກພໍ່ຫລືແມ່ຂອງທ່ານແມ່ນຫຍັງແດ່? (2) ທ່ານໄດ້ເຮັດຕາມຄໍາແນະນໍາປຶກສາຂອງເພິ່ນຢ່າງໃດ?

- ພຣະທັມສຸພາສິດ 1:17 ເປັນພື້ນຖານສໍາລັບຄວາມເຂົ້າໃຈແລະການນໍາພຣະທັມສຸພາສິດໄປໃຊ້ໃນຊີວິດ.

3) **ຖາມ**: ຂໍ້ພຣະທັມເຫລົ່ານີ້ໄດ້ສອນເຮົາເຣື່ອງອິດທິພົນຂອງເພື່ອນໆ ແລະຄົນອື່ນຢ່າງໃດ? ເປັນຫຍັງຄົນເຫລົ່ານີ້ຈຶ່ງ

ສຳຄັນສຳລັບເຮົາ?

4) ເຖິງແມ່ນວ່າພວກເຮົາສ່ວນຫລາຍຄິດວ່າຄວາມກົດດັນຈາກເພື່ອນມີອິດທິພົນຕໍ່ລູກໆ ຂອງພວກເຮົາ ຄວາມກົດດັນນີ້ມີຜົນສະທ້ອນຕໍ່ຊີວິດເຮົາຢ່າງໃດ? ແລະມັນມີຜົນດີຢ່າງໃດ?

5) ຄົນບາບທັງຫລາຍກໍເປັນຜູ້ຮັບຜົນກັມຈາກການກະທຳຂອງຕົນເອງ, ເຂົາເຈົ້າໄດ້ດັກສະກັດເພື່ອຂ້າຕົນເອງ.

6) ໃຫ້ນັກຮຽນຄົນນຶ່ງແບ່ງປັນສັ້ນວ່າ ມີທາງໃດແດ່ທີ່ລາວໄດ້ທຳລາຍຕົນເອງເມື່ອລາວບໍ່ເຫັນຄຸນຄ່າຊີວິດມະນຸດ

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** ສຸພາສິດ 1:10-11,15-16,18

1. ພໍ່ໄດ້ເຕືອນລູກຊາຍຂອງຕົນວ່າຊີວິດນີ້ອາດຈະພົບກັບອັນຕະລາຍຢ່າງໃດ?
2. ພໍ່ຄວນເວົ້າເຣື່ອງຄຸນຄ່າຊີວິດຂອງມະນຸດ ແລະຄຸນຄ່າຊີວິດຂອງລູກຊາຍຂອງຕົນຢ່າງໃດ?
3. ເມື່ອເຮົາອອກຈາກເຮືອນໄປເຮົາຈະໄດ້ຮັບຄວາມກົດດັນຈາກຄົນລຸ້ນດຽວກັນນັ້ນແມ່ນຫຍັງ?
4. ທ່ານໄດ້ເຮັດໃຫ້ຄຸນຄ່າຂອງຄົນອື່ນລົດລົງແນວໃດ?
5. ທ່ານຈະໃຫ້ຄຸນຄ່າຊີວິດເພີ່ມຂຶ້ນໃນອາທິດນີ້ຢ່າງໃດ?

4. **<u>ສິ່ງຄວນຮັກສາໄວ້:</u>** ສຸພາສິດ 24:10-12

1) ຂໍໃຫ້ນັກຮຽນຄົນນຶ່ງອາສາສມັກອ່ານພຣະທັມ ສຸພາສິດ 24:10-12

2) ອະທິບາຍວ່າ ຜູ້ຂຽນພຣະທັມສຸພາສິດໃນບົດທີ 24 ໄດ້ກ່າວເຖິງຄວາມກ້າຫານແລະເຫື່ອແຮງໃນການປົກປ້ອງຄົນອື່ນ.

3) **ຄຳຖາມ:** 1) ເປັນຫຍັງບາງເທື່ອຜູ້ທີ່ເຊື່ອຈຶ່ງຫລີກເວັ້ນ ຫລືເມີນເສີຍຕໍ່ຄວາມບໍ່ເປັນທັມ ແລະຕໍ່ການອາສຍາກັມທີ່ຕໍ່ສູ້ກັບຊີວິດມະນຸດ?

4) ອະທິບາຍວ່າ ຖ້າເຮົາເມີນເສີຍບໍ່ໃຫ້ການສນັບສນຸນຊິດຊ່ອຍຜູ້ໄດ້ຮັບອັນຕະລາຍ ນັ້ນສະແດງໃຫ້ເຫັນເຖິງຈຸດອ່ອນແລະບໍ່ຖວາຍພຣະກຽດແດ່ພຣະເຈົ້າ.

5) ໃຫ້ຫາທາງຮັບໃຊ້ແລະອະທິບາຍເຖິງຄຸນຄ່າຊີວິດຂອງມະນຸດ ໂດຍຈັດໃຫ້ມີການປະຊຸມໃນຄຸ້ມທີ່ທ່ານຢູ່

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** ສຸພາສິດ 1:10-12

1. ໃນເວລາມີບັນຫາທ່ານຈະບັລຍາຍຄວາມເຂັ້ມແຂງຂອງທ່ານໄດ້ແນວໃດ?
2. ທ່ານມີທ່າທີແນວໃດຕໍ່ຜູ້ທີ່ຖືກລົງໂທດຍ້ອນການຄາຕະກັມ?
3. ທ່ານມີທ່າທີແນວໃດຕໍ່ຜູ້ທີ່ຖືກລົງໂທດຢ່າງບໍ່ຍຸດຕິທັມ-ບໍ່ມີຄວາມຜິດ?
4. ເມື່ອທ່ານຮູ້ວ່າພຣະເຈົ້າຊົງຢັ່ງຮູ້ຄວາມຄິດແລະການກະທຳຂອງທ່ານ ມີຄວາມໝາຍຕໍ່ທ່ານແນວໃດ?
5. ທ່ານຈະຮັບຮູ້ຄຸນຄ່າຂອງຊີວິດທຸກຄົນເທົ່າໆກັນ ແລະໃຫ້ຄົນອື່ນເຫັນວ່າຊີວິດທຸກຊີວິດຄວນໄດ້ຮັບການປ້ອງກັນຢ່າງໃດ?

**<u>ສລຸບ:</u>**

1. ອ່ານພຣະຄັມພີແຫ່ງຄວາມຈິງຂອງບົດຮຽນນີ້ ແລະນຳໄປຄິດພິຈາຣະນາ.
2. ມະນຸດທຸກ ໆຄົນແມ່ນພຣະເຈົ້າຊົງໃຫ້ກຳເນີດເກີດມາໃຫ້ລັກສະນະທີ່ຄ້າຍຄືກັບພຣະອົງ.
3. ເຮົາຄວນໃຫ້ເຫດຜົນຄວາມມີຄຸນຄ່າ ແລະປົກປ້ອງຮັກສາທຸກ ໆຊີວິດຂອງມະນຸດໄວ້.
4. ຖາມ: ໃນອາທິດນີ້ທ່ານເຮັດໃຫ້ຊີວິດທ່ານ ແລະຄົນອື່ນ ໆ ມີຄຸນຄ່າດ້ວຍວິທີໃດ?
5. ອະທິຖານປິດຫ້ອງຮຽນ.

ອຸປຖັມໂດຍລາວຊາວເທິນບັບຕິສ, ແປແລະຮຽງໂດຍ J.HD